# ສຶກສາການປູກ ແລະ ຜົນຜະລິດຂອງມັນຕົ້ນໃນ 4 ບ້ານຂອງເມືອງຮົ່ມ ແຂວງວຽງຈັນທີ່ປ້ອນເຂົ້າໂຮງງານຜະລິດແປ້ງມັນຕົ້ນລາວ-ອິນໂດຊາຍນາ

# Study on Cassava Cultivation and Production in 4 villages Of Home District Vientiane Province Transporting to LAO—INDOCHINA Cassava Flour Factory

**ນັກສຶກສາ: ທ້າວ ລໍວັນ ເກຍຕູ້ໄກສີ**

**ອາຈານຊີ້ນຳ: ອາຈານ ບົວສອນ ຫຼວງສັກດາ**

**ພາກວິຊາ: ປູກພືດ, 2010**

## ບົດຄັດຫຍໍ້

ຜ່ານການສຶກສາເຕັກນິກການປູກມັນຕົ້ນ ແລະ ຜົນຜະລິດຂອງມັນຕົ້ນ ຢູ່ 4 ໝູ່ບ້ານຂອງເມືອງຮົ່ມ. ທີ່ມີການປູກມັນຕົ້ນເພື່ອປ້ອນເຂົ້າໃຫ້ທາງໂຮງງານຜະລິດແປ້ງມັນຕົ້ນ. ລາວ-ອິນໂດຊາຍນາ. ໃນໄລຍະເວລາແຕ່ວັນທີ່ 25/10/2009 ຫາ 3/1/2010 ສາມາດສະຫຼຸບ ແລະ ຕີລາຄາໄດ້ດັ່ງນີ້:

ການສຶກສາເຕັກນິກການປູກ ແລະ ຜົນຜະລິດຂອງມັນຕົ້ນຢູ່ໃນເຂດທີ່ລົງສຶກສາ ແລະ ເກັບກຳຂໍ້ມູນ. ຈະເຫັນວ່າ: ການປູກມັນຕົ້ນຂອງຊາວກະສິກອນຈະມີຢູ່ 3 ວິທີຄື:

1. ປູກແບບຕັ້ງຊື່. ຈະເຫັນວ່າປະຊາຊົນມີການນິຍົມປູກຢູ່ປະມານ 85%
2. ປູກແບບງ່ຽງ ຫຼື ນິ້ງ. ຈະເຫັນວ່າປະຊາຊົນມີການນິຍົມປູກຢູ່ປະມານ 10%
3. ປູກແບບນອນ. ຈະເຫັນວ່າປະຊາຊົນມີການນິຍົມປູກຢູ່ປະມານ 5%

ນອກຈາກວິທີການປູກແລ້ວວິທີການຈັດການ ການກະກຽມພື້ນທີ່ເພາະປູກແມ່ນ ເຫັນວ່າສ່ວນຫຼາຍແມ່ນຍັງມີການປູກແບບທຳມະຊາດ ຕະຫຼອດຮອດການບົວລະບັດຮັກສາ ແລະ ການໃສ່ຝຸ່ນ.

ສ່ວນຜົນຜະລິດຂອງມັນຕົ້ນກໍ່ເຫັນວ່າມີຄວາມແຕກຕ່າງກັນໄປ ຂຶ້ນກັບພື້ນທີ່ປູກ ແລະ ການຈັດການຂອງເຈົ້າຂອງສວນຕໍ່ກັບສວນມັນຕົ້ນ ຫຼື ປະຊາຊົນຜູ້ທີ່ປູກມັນຕົ້ນ. ເຊິ່ງເວົ້າລວມແລ້ວແມ່ນຂື້ນກັບຫຼາຍໆປັດໃຈ ເຊັ່ນ: ດິນຟ້າອາກາດ, ຄວາມອຸດົມສົມບູນຂອງດິນ, ເຕັກນິກການປູກ, ແນວພັນ ແລະ ອື່ນໆ.

ບ້ານ ຄອນວັດ ມີເນື້ອທີ່ປູກທັງໝົດ 57,82 ຮຕ ໄດ້ຮັບຜົນຜະລິດສະເລ່ຍ 25 ຕ/ຮຕ ແລະ ຜົນຜະລິດທັງໝົດຕໍ່ເນື້ອທີ່ 1445,5 ຕ/57,82 ຮຕ. ມີມູນຄ່າ 7500000 ກີບ/ຮຕ ເຊິ່ງຂາຍໃນລາຄາ 300 ກ/ກລ (300000 ກ/ຕ, ລາຄາມັນຕົ້ນດິບ). ຄ່າຫຼຸ້ຍຫ້ຽນ 123000 ກ/ປ, ມີລາຍຮັບ 5197000 ກ/ຮຕ, ປະສິດຕິພາບຂອງເນື້ອທີ່ 5197000 ກ/ຮຕ, ປະສິດຕິພາບວັນງານ 26805,12 ກີບ/ມື້.

ບ້ານ ຫີນສໍ ມີເນື້ອທີ່ປູກທັງໝົດ 54,2 ຮຕ ໄດ້ຮັບຜົນຜະລິດສະເລ່ຍ 25 ຕ/ຮຕ ແລະ ຜົນຜະລິດຕໍ່ເນື້ອທັງໝົດ 1355 ຕ/57,82 ຮຕ. ມີມູນຄ່າ 7500000 ກີບ/ຮຕ ເຊິ່ງຂາຍໃນລາຄາ 300 ກ/ກລ (300000 ກ/ຕ, ລາຄາມັນຕົ້ນດິບ). ຄ່າຫຼຸ້ຍຫ້ຽນ 131000 ກ/ປ, ມີລາຍຮັບ 5189000 ກ/ຮຕ, ປະສິດຕິພາບຂອງເນື້ອທີ່ 5189000 ກ/ຮຕ, ປະສິດຕິພາບວັນງານ 33670,96 ກີບ/ມື້.

ບ້ານ ຊຽງມີ ມີເນື້ອທີ່ປູກທັງໝົດ 13,5 ຮຕ ໄດ້ຮັບຜົນຜະລິດສະເລ່ຍ 25 ຕ/ຮຕ ແລະ ຜົນຜະລິດຕໍ່ເນື້ອທັງໝົດ 337,5 ຕ/13,5 ຮຕ. ມີມູນຄ່າ 7500000 ກີບ/ຮຕ ເຊິ່ງຂາຍໃນລາຄາ 300 ກ/ກລ (300000 ກ/ຕ, ລາຄາມັນຕົ້ນດິບ). ຄ່າຫຼຸ້ຍຫ້ຽນ 143600 ກ/ປ, ມີລາຍຮັບ 5176400 ກ/ຮຕ, ປະສິດຕິພາບຂອງເນື້ອທີ່ 5176400 ກ/ຮຕ, ປະສິດຕິພາບວັນງານ 38853,73 ກີບ/ມື້.

ບ້ານ ໂພນໄຊ ມີເນື້ອທີ່ປູກທັງໝົດ 54,85 ຮຕ ໄດ້ຮັບຜົນຜະລິດສະເລ່ຍ 20 ຕ/ຮຕ ແລະ ຜົນຜະລິດຕໍ່ເນື້ອທັງໝົດ 1097 ຕ/54,85 ຮຕ. ມີມູນຄ່າ 6000000 ກີບ/ຮຕ ເຊິ່ງຂາຍໃນລາຄາ 300 ກ/ກລ (300000 ກ/ຕ, ລາຄາມັນຕົ້ນດິບ). ຄ່າຫຼຸ່ຍຫ້ຽນ 137000 ກ/ປ, ມີລາຍຮັບ 3683000 ກ/ຮຕ, ປະສິດຕິພາບຂອງເນື້ອທີ່ 3683000 ກ/ຮຕ, ປະສິດຕິພາບວັນງານ 32286,95 ກີບ/ມື້.